# ຄະນະນຳ ທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ແລະ ລົງເຄື່ອນໄຫວວຽກງານຢູ່ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ




ໃນລະຫວ່າງວັນທີ 5-6 ເມສາ 2023 ຄະນະຮັບຜິດຊອບເຜີຍແຜ່ກົດໝາຍຈາກ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສົມທົບກັບ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ ແລະ ອຳນາດການປົກຄອງເມືອງປາກລາຍ ແລະ ເມືອງແກ່ນທ້າວ ໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ທີ່ເມືອງປາກລາຍ, ເມືອງແກ່ນທ້າວ ແລະ ທີ່ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ ພາຍໃຕ້ການໃຫ້ກຽດເຂົ້າຮ່ວມ ພ້ອມທັງເປັນປະທານໂດຍ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ມີຄະນະກົມຈາກ ທຫລ, ຄະນະສາຂາ ທຫລ.ຫຼບ, ບັນດາພະແນການອ້ອມຂ້າງແຂວງ, ບັນດາຫ້ອງການເມືອງ, ສາຂາທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ແລະ ວິສາຫະກິດເຂົ້າຮ່ວມຢ່າງພ້ອມພຽງ. ກອງປະຊຸມຈັດຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການໃນການປັບປຸງວຽກງານຄຸ້ມຄອງເງິນຕາຕ່າງປະເທດໃຫ້ມີຄວາມຄ່ອງຕົວ ແລະ ສອດຄ່ອງກັບຈຸດພິເສດຂອງແຕ່ລະທ້ອງຖິ່ນ ໂດຍການນຳໃຊ້ ແລະ ຜັນຂະຫຍາຍກົດໝາຍດັ່ງກ່າວເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດຢ່າງມີປະສິດທິພາບ.





ພາຍຫຼັງການເຜີຍແຜ່ກົດໝາຍດັ່ງກ່າວ. ທ່ານ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະຕິດຕາມ ໄດ້ເຂົ້າພົບປະກັບເຈົ້າໜ້າທີ່ພາສີປະຈຳດ່ານ ເພື່ອຕິດຕາມການຄຸ້ມຄອງເງິນຕາຕ່າງປະເທດ, ສະພາບການຄ້າຊາຍແດນ ພ້ອມທັງໄດ້ຍົກໃຫ້ເຫັນບັນຫາ ແລະ ສິ່ງທ້າທາຍໃນການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອໃຫ້ເຈົ້າໜ້າທີ່ດ່ານ ກໍາໄດ້ສະພາບບັນຫາທີ່ຕິດພັນກັບແຕ່ລະພາກສ່ວນ ແລະ ແລກປ່ຽນຂໍ້ມູນກັນຢ່າງເປັນປົກກະຕິ.



ນອກນັ້ນ, ຄະນະຂອງ ທ່ານ ຮອງຜູ້ວ່າການ ຍັງໄດ້ລົງເຄື່ອນໄຫວຢ້ຽມຢາມບ້ານທີ່ມີແນວໂນ້ມນໍາໃຊ້ເງິນຕາຕ່າງປະເທດຢ່າງຊະຊາຍ, ບັນດາບໍລິສັດສົ່ງອອກ ແລະ ຜູ້ປະກອບການຈໍານວນໜຶ່ງ ເປັນຕົ້ນ ໂຮງງານຜະລິດມັນຕົ້ນ, ລານຕາກມັນຕົ້ນຂອງບໍລິສັດຈໍານວນໜຶ່ງທີ່ແຂວງໄຊຍະບູລີ ແລະ ເຂດທ່າບົກ ຢູ່ແຂວງຫຼວງພະບາງ ເພື່ອເກັບກໍາສະພາບການດໍາເນີນໂຄງການ ແລະ ການເຄື່ອນໄຫວທຸລະກິດ ໂດຍສະເພາະວຽກງານການຊໍາລະສະສາງພາຍໃນດ່ານ, ການຊໍາລະ ແລະ ຮັບຊໍາລະຂອງບໍລິສັດສົ່ງອອກ-ນໍາເຂົ້າສິນຄ້າ.

**ຂ່າວ: ເຄນສະຫວັດ ສຸກສະຫວັນ**
**ພາບ: ກັນຈະນາ ໄຊຍະວົງ**